## ຂັ້ນຕອນການສະໝັກ:

**A**

- ພະແນກ ກະສິກໍາ ແລະ ປ່າໄມ້ (ກປ) ແຂວງ/ຫ້ອງການ ກປ ເມືອງ ລົງໂຄສະນາ ແລະ ເຜີຍແຜ່ຂໍ້ມູນ
- ໂຄສະນາເປີດຮັບການສະແດງເຈດຈໍານົງໃນການເຂົ້າຮ່ວມຂອງຊາວກະສິກອນ/ຜູ້ຜະລິດ ໃນການສ້າງຕັ້ງກຸ່ມຊາວນາທີ່ນໍາໃຊ້ເຕັກໂນໂລຊີກະສິກໍາທັນສະໄໝ

**B**

- ພະແນກ ກປ ແຂວງ/ຫ້ອງການ ກປ ເມືອງ ຊ່ວຍອໍານວຍຄວາມສະດວກການຈົດທະບຽນຊາວນາເຂົ້າໃນກຸ່ມຜະລິດແນວພັນ ແລະ ກຸ່ມຜະລິດເປັນສິນຄ້າ ທີ່ຫ້ອງການ ກປ ເມືອງ
- ສ້າງຕັ້ງຄະນະກໍາມະການຄຸ້ມຄອງກຸ່ມຊາວນາ ແລະ ເປີດບັນຊີທະນາຄານຢູ່ທ້ອງຖິ່ນໃນເຂດໃກ້ຄຽງ
- ກໍານົດຄວາມຕ້ອງການຂອງ ກຸ່ມຜະລິດເມັດພັນ/ກຸ່ມຜະລິດເປັນສິນຄ້າ ໃນການຝຶກອົບຮົມ ກ່ຽວກັບການຜະລິດ ແລະ ເຕັກໂນໂລຊີການເກັບຮັກສາຜົນຜະລິດຫຼັງການເກັບກ່ຽວ

**C**

- ພະແນກ ກປ ແຂວງ/ຫ້ອງການ ກປ ເມືອງ ຝຶກອົບຮົມ ການກະກຽມແຜນທຸລະກິດ, ການຜະລິດກະສິກໍາທີ່ດີ (GAP), ການຜະລິດເມັດພັນ ແລະ ການເຮັດກະສິກໍາອິນຊີ
- ພະແນກ ກປ ແຂວງ/ຫ້ອງການ ກປ ເມືອງ ຈະຊ່ວຍເຫຼືອກຸ່ມຜະລິດເມັດພັນ/ກຸ່ມຜະລິດເປັນສິນຄ້າ ໃນການກະກຽມແຜນທຸລະກິດ
- ກຸ່ມຜະລິດເມັດພັນ ແລະ ກຸ່ມຜະລິດເປັນສິນຄ້າ ຈະສົ່ງແຜນທຸລະກິດໃຫ້ ພະແນກ ກປ ແຂວງ ແລະ ຫ້ອງການປະສານງານຂັ້ນສູນກາງ

**D**

- ແຜນທຸລະກິດຈະຖືກປະເມີນໂດຍຄະນະກໍາມະການທີ່ໄດ້ຖືກແຕ່ງຕັ້ງຂຶ້ນໂດຍ ພະແນກ ກປ ແຂວງ, ຄະແນນ ແລະ ຄໍາຕໍານິຕິຊົມ ຈາກການປະເມີນຈະແຈ້ງໃຫ້ແກ່ ກຸ່ມຜະລິດເມັດພັນ/ກຸ່ມຜະລິດເປັນສິນຄ້າ ຮັບຮູ້
- ຖ້າຜ່ານການປະເມີນ ພະແນກ ກປ ແຂວງ ຈະເຊີນ ກຸ່ມຜະລິດເມັດພັນ/ກຸ່ມຜະລິດເປັນສິນຄ້າ ເຊັນສັນຍາການໃຫ້ທຶນຊ່ວຍເຫຼືອລະຫວ່າງ ຫົວໜ້າພະແນກ ກປ ແຂວງ ແລະ ປະທານກຸ່ມຜະລິດເມັດພັນ/ກຸ່ມຜະລິດເປັນສິນຄ້າ

**E**

- ກຸ່ມຜະລິດເມັດພັນ/ກຸ່ມຜະລິດເປັນສິນຄ້າສາມາດ ຈັດຕັ້ງປະຕິບັດຕາມແຜນທຸລະກິດ ແລະ ສາມາດສະເໜີເອົາທຶນສົມທົບງວດທໍາອິດສູງສຸດເຖິງ 90%
- ສະມາຊິກພາຍໃນກຸ່ມເກີນ 50% ນໍາໃຊ້ເຕັກນິກການຜະລິດກະສິກໍາ (ການເຮັດກະສິກໍາທີ່ດີ, ການຜະລິດເມັດພັນ, ການເຮັດກະສິກໍາອິນຊີ)
- ປ່ອຍທຶນຄັ້ງສຸດທ້າຍພາຍຫຼັງທີ່ກຸ່ມຊາວກະສິກອນໄດ້ຮັບການຢັ້ງຢືນການນໍາໃຊ້ເຕັກນິກການຜະລິດກະສິກໍາທີ່ໄດ້ຖ່າຍທອດໃຫ້ ຈາກຫ້ອງການ ກປ ເມືອງ/ພະແນກ ກປ ແຂວງ ຈະໄດ້ຮັບທຶນອີກ 10% ທີ່ຍັງເຫຼືອ

## ກຸ່ມຊາວກະສິກອນເປົ້າໝາຍ:

ຊາວກະສິກອນທີ່ໄດ້ສ້າງຕັ້ງເປັນກຸ່ມຜະລິດເມັດພັນ ແລະ ກຸ່ມຜະລິດເປັນສິນຄ້າ ແຕ່ລະແຂວງໃນເຂດພື້ນທີ່ໂຄງການປະກອບມີ:

1. ແຂວງຄໍາມ່ວນ: ຕ່ອງໂສ້ມູນຄ່າການຜະລິດເຂົ້າ ແລະ ພືດຜັກ ຢູ່ ເມືອງມະຫາໄຊ, ເມືອງໄຊບົວທອງ ແລະ ເມືອງຍົມມະລາດ.
2. ແຂວງບໍລິຄໍາໄຊ: ຕ່ອງໂສ້ມູນຄ່າການຜະລິດເຂົ້າ ແລະ ພືດຜັກ ຢູ່ ເມືອງບໍລິຄັນ, ເມືອງປາກຊັນ ແລະ ເມືອງທ່າພະບາດ.
3. ແຂວງໄຊຍະບູລີ: ຕ່ອງໂສ້ມູນຄ່າການຜະລິດສາລີ, ເຂົ້າ ແລະ ພືດຜັກ ຢູ່ ເມືອງພຽງ, ເມືອງປາກລາຍ, ເມືອງໄຊຍະບູລີ, ແລະ ເມືອງຊຽງຮ່ອນ.
4. ແຂວງວຽງຈັນ: ຕ່ອງໂສ້ມູນຄ່າການຜະລິດເຂົ້າ ແລະ ພືດຜັກ ຢູ່ ເມືອງທຸລະຄົມ.
5. ນະຄອນຫຼວງວຽງຈັນ: ຕ່ອງໂສ້ມູນຄ່າການຜະລິດເຂົ້າ ແລະ ພືດຜັກ ຢູ່ ເມືອງປາກງື່ມ, ເມືອງຫາດຊາຍຟອງ ແລະ ເມືອງໄຊທານີ.

### ສອບຖາມຂໍ້ມູນເພີ່ມຕື່ມກະລຸນາຕິດຕໍ່:


ໂຄງການຜະລິດກະສິກໍາເປັນສິນຄ້າຢູ່ ສປປ ລາວ

(ຕຶກໂຄງການຮ່ວມມືຂອງ ກະຊວງກະສິກໍາ ແລະ ປ່າໄມ້)

ບ້ານ ໂພນໄຊ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ

ໂທ.: +856-21-410073 ແຟັກ.: +856-21-410074

ອີເມວ: s_phouthone@yahoo.com

pnssamountry@gmail.com

ເວັບໄຊທ໌: https://www.lacp-maf.org/


# ກະຊວງກະສິກໍາ ແລະ ປ່າໄມ້

# ກົມແຜນການ ແລະ ການເງິນ

## ໂຄງການຜະລິດກະສິກໍາເປັນສິນຄ້າ ຢູ່ ສປປ ລາວ (LACP)

# ທຶນສົມທົບ ສໍາລັບຊາວກະສິກອນ

www.lacp-maf.org

## ທຶນສົມທົບສຳລັບຊາວກະສິກອນ:

ທຶນສົມທົບສຳລັບຊາວກະສິກອນແມ່ນຢູ່ພາຍໃຕ້ການຄຸ້ມຄອງຂອງ ໂຄງການການຜະລິດກະສິກຳເປັນສິນຄ້າ ຢູ່ ສປປລາວ (LACP), ໂດຍໄດ້ຮັບການສະໜັບສະໜູນຈາກ ທະນາຄານໂລກ ແລະ ຈັດຕັ້ງປະຕິບັດໂດຍ ກະຊວງກະສິກຳ ແລະປ່າໄມ້ (ກປ) ແລະ ກະຊວງ ອຸດສາຫະກຳ ແລະ ການຄ້າ (ອຄ), ເພື່ອແນໃສ່ການເພີ່ມຂີດຄວາມສາມາດໃນແຂ່ງຂັນຂອງຕ່ອງໂສ້ມູນຄ່າການຜະລິດກະສິກຳ ໃນເຂດພື້ນທີ່ໂຄງການ.

ທຶນສົມທົບດັ່ງກ່າວ ຈະຊ່ວຍເຮັດໃຫ້ຊາວກະສິກອນສາມາດເພີ່ມຜົນຜະລິດຈາກການນຳໃຊ້ພື້ນທີ່ໃນການຜະລິດກະສິກຳ ໂດຍການເຂົ້າເຖິງເຕັກໂນໂລຊີດ້ານກະສິກຳທີ່ທັນສະໄໝ, ການຜະລິດກະສິກຳທີ່ມີຄຸນນະພາບ, ການເຊື່ອມໂຍງຕະຫຼາດໂດຍຜ່ານການເປັນຫຸ້ນສ່ວນດ້ານການຜະລິດ ແລະ ເພີ່ມຍອດຂາຍຜະລິດຕະພັນສິນຄ້າກະສິກຳ.

## ຈຸດປະສົງຂອງທຶນສົມທົບສຳລັບຊາວກະສິກອນ

ທຶນສົມທົບສຳລັບຊາວກະສິກອນ ແມ່ນມີຈຸດປະສົງເພື່ອສົ່ງເສີມການຜະລິດແນວພັນທີ່ມີຄຸນະພາບ ຂອງ ກຸ່ມຜະລິດເມັດພັນ ແລະ ການຜະລິດກະສິກຳສະອາດ (ໝາຍເຖິງການນຳໃຊ້ແນວພັນທີ່ໄດ້ຮັບການຢັ້ງຢືນ, ການຄຸ້ມຄອງດິນ ແລະ ນ້ຳ ແບບຍືນຍົງ, ການຄວບຄຸມສັດຕູພືດແບບປະສົມປະສານ, ການຈັດການກັບພື້ນທີ່ທີ່ແຫ້ງແລ້ງ ແລະ ພື້ນທີ່ປຽກຊຸ່ມ ໃນການປູກເຂົ້າ ແລະ ການປູກພືດຫມູນວຽນ ແລະ ລາກຫລາຍ) ຂອງກຸ່ມຜະລິດເປັນສິນຄ້າ. ທຶນສົມທົບສຳລັບຊາວກະສິກອນແມ່ນໃຫ້ນຳໃຊ້ເຂົ້າໃນສອງກຸ່ມເປົ້າໝາຍຄື:

(ກ) ທຶນສົມທົບສຳລັບຊາວກະສິກອນ ແມ່ນຈະສະໜອງໃຫ້ກຸ່ມຜະລິດເມັດພັນທີ່ຖືກຄັດເລືອກ ເພື່ອປະຕິບັດແຜນທຸລະກິດ (ໂຄງການຍ່ອຍ) ໃນການປັບປຸງການຜະລິດ ແລະ ການເກັບຮັກສາຜົນຜະລິດຫຼັງການເກັບກ່ຽວ, ການຫຸ້ມຫໍ່ ແລະ ເກັບຮັກສາເມັດພັນທີ່ມີຄຸນນະພາບ.

ຂ) ທຶນສົມທົບສຳລັບຊາວກະສິກອນ ແມ່ນຈະສະໜອງໃຫ້ກຸ່ມຜະລິດເປັນສິນຄ້າທີ່ຖືກຄັດເລືອກ ເພື່ອຈັດຕັ້ງປະຕິບັດໂຄງການຍ່ອຍໃນການຈັດຕັ້ງປະຕິບັດການຜະລິດກະສິກຳສະອາດ ເພື່ອຍົກລະດັບຄຸນນະພາບການຜະລິດ ແລະ ການເກັບຮັກສາຜົນຜະລິດຫຼັງການເກັບກ່ຽວ, ການຫຸ້ມຫໍ່ ແລະ ການເກັບຮັກສາຜົນຜະລິດກະສິກຳ.



**(ກຸ່ມຜະລິດເມັດພັນ)**



**(ກຸ່ມຜະລິດເປັນສິນຄ້າ)**

## ກົດລະບຽບໃນການສະໜອງທຶນ

1. ***ອັດຕາສ່ວນຂອງທຶນສົມທົບສຳລັບຊາວກະສິກອນ.***

ອັດຕາສ່ວນທຶນສົມທົບສູງສຸດຈະຢູ່ທີ່ 80 ເປີເຊັນຂອງແຜນການລົງທຶນທີ່ຜ່ານການອະນຸມັດ ແລະ ບໍ່ເກີນ 16,000 ໂດລາສະຫະລັດ ຕໍ່ໜຶ່ງທຶນຕໍ່ໜຶ່ງກຸ່ມ.

2. ***ເກນໃນການຄັດເລືອກ***

| ກຸ່ມຜະລິດເມັດພັນ | ກຸ່ມຜະລິດເປັນສິນຄ້າ |
|---|---|
| • ສ້າງຕັ້ງກຸ່ມ<br>• ມີສະມາຊິກເຖິງ 20 ຄົນ<br>• ສົນໃຈເຂົ້າຮ່ວມນຳໃຊ້ເຕັກນິກການຜະລິດກະສິກຳທີ່ດີ ແລະ ອິນຊີ<br>• ສົນໃຈເຊື່ອມໂຍງກັບກຸ່ມຜະລິດເປັນສິນຄ້າ ແລະ ຜູ້ປະກອບການເພື່ອເຂົ້າຫາຕະຫຼາດ<br>• ສາມາດປະກອບສ່ວນ 20%<br>• ຕ້ອງມີສະມາຊິກເພດຍິງເຂົ້າຮ່ວມຢ່າງໜ້ອຍ 35% | • ສ້າງຕັ້ງກຸ່ມ<br>• ມີສະມາຊິກເຖິງ 50 ຄົນ<br>• ສົນໃຈເຂົ້າຮ່ວມການນຳໃຊ້ເຕັກນິກການຜະລິດກະສິກຳທີ່ດີ ແລະ ອິນຊີ<br>• ສົນໃຈເຊື່ອມໂຍງກັບກຸ່ມຜະລິດເປັນສິນຄ້າ ແລະ ຜູ້ປະກອບການເພື່ອເຂົ້າຫາຕະຫຼາດ<br>• ສາມາດປະກອບສ່ວນ 20%<br>• ຕ້ອງມີສະມາຊິກເພດຍິງເຂົ້າຮ່ວມຢ່າງໜ້ອຍ 35% |

3. ***ຄ່າໃຊ້ຈ່າຍຕ່າງໆ***

| ໂຄງການ | ກຸ່ມຜະລິດເມັດພັນ |
|---|---|
| ການຈັດຊື້ແນວພັນທີ່ຜ່ານການຢັ້ງຢືນຄຸນນະພາບ R1/R2 | ການກະກຽມດິນ |
| ອຸປະກອນ, ສິ່ງອຳນວຍຄວາມສະດວກໃນການດຳເນີນວຽກງານຕ່າງໆ | ປັດໄຈໃນການຜະລິດກະສິກຳ |
| - ຄ່າການຜະລິດກະສິກຳ | ຄ່ານ້ຳ |
| - ການຈັດການຫຼັງການເກັບກ່ຽວ | ຄ່າໄຟຟ້າ |
| - ການຫຸ້ມຫໍ່ | ແຮງງານ |
| - ການເກັບຮັກສາເມັດພັນທີ່ມີຄຸນນະພາບ | ຄ່າທຳນຽມອອກໃບຢັ້ງຢືນຄຸນນະພາບ |

| ໂຄງການ | ກຸ່ມຜະລິດເປັນສິນຄ້າ |
|---|---|
| ການຈັດຊື້ແນວພັນພືດທີ່ຜ່ານການຢັ້ງຢືນຄຸນນະພາບ R3 | ກະກຽມດິນ |
| ອຸປະກອນ, ສິ່ງອຳນວຍຄວາມສະດວກໃນການດຳເນີນວຽກງານຕ່າງໆ | ປັດໄຈໃນການຜະລິດກະສິກຳ |
| - ການຜະລິດກະສິກຳທີ່ດີ | ຄ່ານ້ຳ |
| - ການຈັດການຫຼັງການເກັບກ່ຽວ | ຄ່າໄຟຟ້າ |
| - ການຫຸ້ມຫໍ່ | ແຮງງານ |
| - ການເກັບຮັກສາຜົນຜະລິດ | ຄ່າທຳນຽມອອກໃບຢັ້ງຢືນ ແລະ ກວດກາຄຸນນະພາບ |

4. ***ປະຕິບັດຕາມນະໂຍບາຍການປົກປ້ອງສິ່ງແວດລ້ອມ ແລະ ສັງຄົມ***

ການຈັດຕັ້ງປະຕິບັດກິດຈະກຳຕ່າງໆຈະຕ້ອງສອດຄ່ອງກັບນະໂຍບາຍການປົກປ້ອງດ້ານສິ່ງແວດລ້ອມ ແລະ ສັງຄົມ ຂອງ ທະນາຄານໂລກ ແລະ ບໍ່ໃຫ້ເອົາກິດຈະກຳທີ່ຂັດຕໍ່ກັບນະໂຍບາຍການຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ (ESMF).

## ເກນໃນການຄັດເລືອກ

ຊາວກະສິກອນໃນເຂດເມືອງເປົ້າໝາຍ ຂອງບັນດາແຂວງຂອງໂຄງການຜູ້ທີ່ສົນໃຈໃນການຮັບທຶນສົມທົບສາມາດສະແດງເຈດຈຳນົງຫາ ຫ້ອງການກະສິກຳ ແລະ ປ່າໄມ້ (ກປ) ເມືອງ ແລະ ພະແນກກະສິກຳ ແລະ ປ່າໄມ້ (ກປ) ແຂວງທຸກຄັ້ງທີ່ພວກເຂົາພ້ອມທີ່ຈະເຂົ້າຮ່ວມ.

ພາຍໃນໜຶ່ງເດືອນຫຼັງຈາກທີ່ໄດ້ແຈ້ງເຈດຈຳນົງຢາກເຂົ້າຮ່ວມໂຄງການ, ຫ້ອງການ ກປ ເມືອງ ແລະ ພະແນກ ກປ ແຂວງ ຈະອຳນວຍຄວາມສະດວກໃຫ້ແກ່ຊາວກະສິກອນທີ່ສົນໃຈ ໃນການສ້າງຕັ້ງກຸ່ມຜະລິດເມັດພັນ ຫຼື ກຸ່ມຜະລິດເປັນສິນຄ້າ ແລະ ດຳເນີນການຈົດທະບຽນຢູ່ຂັ້ນເມືອງ.

ຫຼັງຈາກທີ່ເຮັດກະສິກຳໃນແຕ່ລະຮອບ (ຕົວຢ່າງ: 4-6 ເດືອນ), ກຸ່ມຊາວກະສິກອນຈະໄດ້ຮັບການແນະນຳໃຫ້ປະເມີນຕົນເອງ ເພື່ອຕິດຕາມກວດກາຄວາມຄືບໜ້າ ແລະ ສະໜອງທຶນສົມທົບງວດສຸດທ້າຍໃຫ້.